




ໃນວັນທີ 09/09/2011 ກົມອາຊີວະສຶກສາໄດ້ຈັດກອງປະຊຸມໃຫ້ຄໍາປຶກສາ ໃນຂອບວຸດທິການສຶກສາທີ່ສູນພັດທະນາອາຊີວະສຶກສາ ໂດຍການເປັນກຽດເຂົ້າຮ່ວມເປັນປະທານຂອງທ່ານ ພູວຽງ ພູມີໄລ ຮອງຫົວໜ້າກົມອາຊີວະສຶກສາ, ເປັນກຽດເຂົ້າຮ່ວມຂອງທ່ານ ສຸລິຄໍາກອນ ສີສຸລາດ ຫົວໜ້າສູນພັດທະນາອາຊີວະສຶກສາ ແລະ ແຂກຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ 35 ທ່ານ, ຈຸດປະສົງຂອງກອງປະຊຸມແມ່ນ ເພື່ອສໍາຫຼວດແນວຄວາມຄິດນະໂຍບາຍຕໍ່ກັບຂອບວຸດທິການສຶກສາໃນພາກພື້ນອາຊຽນ ແລະ ເພື່ອພັດທະນາ ແລະ ສັງລວມແຜນການຕ່າງໆ ທີ່ຈະນໍາໄປປະຕິບັດ, ລວມທັງວາລະທີ່ຕ້ອງດໍາເນີນການເພື່ອສ້າງຂີດຄວາມສາມາດໃນຂອບຄຸນນະວຸດ ແລະ ລະບົບປະກັນຄຸນນະພາບຕ່າງໆ